# ການຮ່ວມຈິດຮ່ວມໃຈກັນ

## ---ໃນໂອກາດວັນຕັ້ງສາຍພົວພັນທາງການທູດ ລະຫວ່າງ ລາວ-ຈີນ ຄົບຮອບ 65 ປີ

ປີນີ້ແມ່ນປີຄົບຮອບ 65 ປີຂອງການສ້າງຕັ້ງສາຍພົວພັນການທູດລະຫວ່າງລາວ-ຈີນ. ໃນປີທີ່ພິເສດນີ້, ພວກເຮົາໄດ້ນຳສະເໜີ ແລະ ບັນທຶກປະສົບການທີ່ແທ້ຈິງຂອງຄົນຈີນສອງຄົນໃນການອຸທິດຕົນເພື່ອການຮ່ວມມືມິດຕະພາບລາວ-ຈີນ.



### ໄຕ້ແສງໄຟໃນພູເລີກ

ທ່ານ ຊົ້ງໝິນອິງ (Song Minying) ຜູ້ອຳນວຍການຝ່າຍຈີນ ສະຖາບັນຂົງຈື້ ມະຫາວິທະຍາໄລສຸພານຸວົງ

ໃນຊຸມປີເຫຼົ່ານີ້ທີ່ປະຕິບັດໜ້າທີ່ຢູ່ປະເທດລາວ, ຂ້າພະເຈົ້າຄິດຢູ່ສະເໝີວ່າ ຄວາມໝາຍຂອງພາສາແມ່ນຢູ່ບ່ອນໃດແທ້. ຈິນມາຮອດການຍ່າງເຂົ້າໄປໃນພູເລີກທີ່ຢູ່ພາກເໜືອຂອງປະເທດລາວ, ແນມເຫັນ ຊາວໜຸ່ມລາວເຫຼົ່ານັ້ນທີ່ກຳລັງຖືເຄື່ອງຈອດເຫຼັກ, ມືຈັບແບບແຜນຜັງ, ເທຖານຂອງອາຄານໃນກອງດິນຕົມ, ຂ້າພະເຈົ້າຈຶ່ງເຂົ້າໃຈວ່າ: ພາສາຈີນບໍ່ແມ່ນພຽງເຄື່ອງໝາຍໂຕອັກສອນ, ແມ່ນຂົວ; ພະລັງງານແສງຕາເວັນ ບໍ່ແມ່ນພຽງແຕ່ເຕັກໂນໂລຊີເທົ່ານັ້ນ, ແຕ່ຍັງແມ່ນແສງສະຫວ່າງ; ແລະ ສິ່ງພວກເຮົາເຮັດຄື: "ພາສາຈີນ+", ແມ່ນການນຳພາຊະຕາກຳຂອງຊາວໜຸ່ມສອງປະເທດເຊື່ອມໂຍງໃຫ້ແໜ້ນແຟ້ນ.

ອຸດົມໄຊ ຫາກໍ່ຜ່ານລະດູຝົນໄປ, ທາງພູຍັງຄົງມີດິນຕົມຢູ່. ຂ້າພະເຈົ້າພານັກຮຽນໄປເມືອງໄຊ, ເພື່ອຄົ້ນຄວ້າສຳຫຼວດກ່ຽວກັບຖານການເຮັດວຽກ ແລະ ການຝຶກງານ "ພາສາຈີນ+ພະລັງງານແສງຕາເວັນ". ລົດແລ່ນສັ່ນສະເທືອນໄປຕາມເສັ້ນທາງທີ່ອ້ອມໄປຕາມພູ 2 ຊົ່ວໂມງ, ນາງ ປາຍລີຫຼີນ ນັກສຶກສາ ຊີ້ໄປນອກປ່ອງຢ້ຽມແລ້ວເວົ້າຫົວຂຶ້ນວ່າ:" ອາຈານ,ເຮືອນຂ້ອຍຢູ່ທາງໜ້ານີ້." ຜູ້ທີ່ບໍ່ມີພື້ນຖານພາສາຈີນນີ້, ນັ່ງຢູ່ແຖວທຳອິດສະເໝີ, ເທິງປຶ້ມຂຽນເຕັມໄປດ້ວຍພິນອິນ ແລະ ໂຕອັກສອນຈີນ, ເຄີຍຖາມຂ້າພະເຈົ້າແບບອາຍໆວ່າ:" ຮຽນພວກນີ້ແລ້ວ, ສາມາດໄປຕັ້ງແຜ່ນພະລັງງານແສງຕາເວັນ ໃນບ້ານໄດ້ແທ້ແມ່ນບໍ? ", ໃນຕອນນັ້ນ, ແສງສະຫວ່າງໃນຕາຂອງລາວ, ແຈ້ງສະຫວ່າງກວ່າແສງຕາເວັນຂຶ້ນເທິງພູອີກ.

ສະຖານທີ່ກໍ່ສ້າງ ມີຂີ້ຝຸ່ນຂີ້ດິນໄງ່ກຸ້ມທີບ, ຂ້າພະເຈົ້າໄດ້ຍິນຄົນໃຊ້ພາສາຈີນທີ່ຍັງບໍ່ຄ່ອງປານໃດເວົ້າວ່າ "ສະບາຍດີ ອາຈານຊົ້ງ". ລາວຖອດໝວກກັນກະທົບອອກ, ແມ່ນ ທ້າວ ຫວາງ ປິນຮັ້ນ ທີ່ຮຽນຈົບປີກາຍ, ໃບໜ້າເຕັມໄປດ້ວຍເຫື່ອ ແລະ ຮອຍຍິ້ມທີ່ສົດໃສ. ລາວ ແລະ ໝູ່ເພື່ອນໄດ້ເຂົ້າຮ່ວມເຮັດວຽກຢູ່ບໍລິສັດ CGN Energy Laos, ເຂົ້າຮ່ວມໂຄງການຮ່ວມມືລາວ-ຈີນ ດ້ານພະລັງງານແສງຕາເວັນ, ປັດຈຸບັນສາມາດສື່ສານກັບຄົນຈີນໄດ້ຢ່າງບໍ່ມີອຸປະສັກ. ລາວນັ່ງຢ່ອງຢໍ້ຢູ່ຕໍ່ໜ້າຖານຊີມັງທີ່ຫາກໍ່ເທແລ້ວ. ລາວຄ່ອຍໆລູບພື້ນສີເທົາທີ່ຍັງປຽກຢູ່ວ່າ:" ຖານນີ້ຕ້ອງແບກຮັບແຜ່ນພະລັງງານແສງຕາເວັນ ໄປອີກ 30 ປີ, ບໍ່ສາມາດມີຄວາມຄາດເຄື່ອນໄດ້ແມ່ນແຕ່ມິນ (ມິນລີແມັດ) ດຽວ". ທັນໃດນັ້ນ ຂ້າພະເຈົ້າກໍຄິດເຖິງຄຳທີ່ເຄີຍສອນໃນຫ້ອງ: ຮາກຖານ.

ທຳອິດ ເມື່ອມາຮອດສະຖາບັນຂົງຈື້ ມະຫາວິທະຍາໄລສຸພານຸວົງ, ຂ້າພະເຈົ້າກໍຄິດສະເໝີວ່າ: ການສິດສອນພາສາຈີນເຮັດແນວໃດຈຶ່ງຈະກ້າວເຂົ້າໄປໃນຊີວິດຄົນລາວ? ພວກເຮົາຮ່ວມມືກັບມະຫາວິທະຍາໄລນຳສະເໜີໂຄງການ "ພາສາຈີນ+ພະລັງງານແສງຕາເວັນ", ນຳເອົາການສອນພາສາ ປະສານເຂົ້າກັບທັກສະວິຊາຊີບຢ່າງເລິກເຊິ່ງ, ຈາກການສຳຫຼວດລອງຜິດລອງຖືກສູ່ການກ້າວຢ່າງຢ່າງໝັ້ນຄົງ. ເວລາ 3 ປີ, ນັກສຶກສາຫຼາຍກວ່າ 100 ຄົນທີ່ຍ່າງອອກຈາກບ່ອນນີ້, ແລ້ວກ້າວເຂົ້າສູ່ ບໍລິສັດທີ່ຈີນລົງທຶນ, ກ້າວເຂົ້າສູ່ບໍລິສັດພະລັງງານ, ກັບໄປສ້າງສາບ້ານເກີດຂອງຕົນໃນພູເລີກ.

ມື້ນັ້ນໃນລະຫວ່າງທາງ ທີ່ກັບຈາກການຄົ້ນຄວ້າສຳຫຼວດ, ຄວາມມືດຂອງຍາມຄ່ຳປົກຄຸມສາຍພູ. ໄຟຕາລົດສ່ອງຜ່ານຄວາມມືດ, ນັກສຶກສາ ຄຳພັນ ເບິ່ງອອກໄປນອກປ່ອງຢ້ຽມ ເວົ້າສຽງຄ່ອຍໆວ່າ: "ສະຖານີໄຟຟ້າສ້າງສຳເລັດແລ້ວ, ບ້ານຂ້ອຍກໍມີໄຟແຈ້ງແລ້ວ. ແມ່ກໍບໍ່ຕ້ອງໄປເອົານ້ຳຢູ່ແມ່ນ້ຳແຕ່ຟ້າຍັງບໍ່ແຈ້ງ, ຈັກສູບນ້ຳກໍຈະສາມາດໃຊ້ໄດ້ແລ້ວ." ໃຈຂອງຂ້າພະເຈົ້າທັນໃດນັ້ນ ກໍອຸ່ນຮ້ອນຂຶ້ນມາ. ສິ່ງທີ່ພວກເຂົາເທ, ບໍ່ໄດ້ແມ່ນພຽງແຕ່ຖານຊີມັງ, ແຕ່ແມ່ນຜັງຊີວິດຂອງຕົນ; ສາຍໄຟທຸກນິ້ວທີ່ພວກເຂົາຈັດວາງ, ລ້ວນແຕ່ໄດ້ຫຍໍ້ໄລຍະທາງລະຫວ່າງພູຜາທີ່ເລິກ ແລະ ໂລກອັນທັນສະໄໝ. ສິ່ງທີ່ພວກເຮົາສອນ, ບໍ່ພຽງແຕ່ແມ່ນພາສາຈີນ ແລະ ວົງຈອນໄຟຟ້າ, ແມ່ນກະແຈທີ່ເປີດອະນາຄົດໃຫ້ຊາວໜຸ່ມ, ເພື່ອໃຫ້ມິດຕະພາບລາວ-ຈີນປະກົດໃນແສງໄຟທຸກດວງທີ່ແຈ້ງສະຫວ່າງ, ໃນທຸກຄັ້ງຂອງການສະໜອງໄຟຢ່າງໝັ້ນຄົງ ແລະ ໃນຮອຍຍິ້ມຂອງທຸກຄອບຄົວ.

ຫຼາຍປີມານີ້ທີ່ຢູ່ຕ່າງແດນ, ຂ້າພະເຈົ້າໄດ້ສຳຜັດກັບຕົນເອງເຖິງມິດຕະພາບລາວ-ຈີນ ຈາກການຮ່ວມມືໃນລະດັບປະເທດ, ແລະ ຖ່າຍທອດລົງມາເທື່ອລະຍົດໃນການສອນໃນຊີວິດປະຈຳວັນ, ໃນການຍຶດໝັ້ນເຮັດວຽກໃນສະຖານທີ່ກໍ່ສ້າງ, ໃນບາດກ້າວການເຕີບໃຫຍ່ຂອງຊາວໜຸ່ມ. ຈາກ "ພາສາຈີນ+ພະລັງງານແສງອາທິດ" ຈິນຮອດ "ພາສາຈີນ + ທັກສະວິຊາຊີບ" ທີ່ຫຼາກຫຼາຍເຊັ່ນ: ພະລັງງານໄຟຟ້າ, ທາງລົດໄຟ, ການແພດການປິ່ນປົວ, ກະສິກຳ, ພວກເຮົາໄດ້ບົ່ມເພາະຊັບພະຍາກອນມະນຸດໃນທ້ອງຖິ່ນທີ່ມີທັກສະຫຼາກຫຼາຍ ໃຫ້ແກ່ໂຄງການບໍລິຫານ ແລະ ບຳລຸງຮັກສານ້ຳອູຂອງບໍລິສັດ Power China, ຂຽນຕຳລາຮຽນດ້ານພະລັງງານແສງຕາເວັນ ສອງພາສາ ຈີນ-ລາວ, ວັດຈະນານຸກົມວິສະວະກຳພະລັງງານໄຟຟ້າຈີນ-ລາວ, ເພີ່ມຊ່ອງວ່າງຊັບພະຍາກອນການສຶກສາໃນທ້ອງຖິ່ນ ນີ້ບໍ່ແມ່ນການຖ່າຍທອດຝ່າຍດຽວ, ແຕ່ແມ່ນການກ້າວເຂົ້າຫາກັນທັງສອງຝ່າຍ, ແມ່ນຈິດໃຈທີ່ເຊື່ອມໂຍງກັນ, ແມ່ນການລົງມືປະຕິບັດເພື່ອຮ່ວມຊາຕາກຳດຽວກັນ.

ນາງ ຫຼີເໝີຍ ສົ່ງຮູບທີ່ຖ່າຍລວມກັນຢູ່ສະຖານທີ່ກໍ່ສ້າງມາ: ແສງຕາເວັນຍາມແລງທີ່ສ່ອງຢູ່ໂຄງພະລັງງານແສງຕາເວັນທີ່ເປັ່ງປະກາຍ, ເພື່ອນຮ່ວມວຽກກອດກັນຍິ້ມ. ແຖວທາງລຸ່ມຂອງຮູບຂຽນວ່າ: "ອາຈານ, ມື້ທີ 100 ຂອງໂຄງການ, ໂຄງສ້າງຖືກສ້າງຂຶ້ນມາແລ້ວ ທຸກຄົນພາກັນໄຫ້."

ຂ້າພະເຈົ້າຄິດເຖິງບົດກອນທີ່ເຄີຍສອນພວກເຂົາ:" ມີມື້ໜຶ່ງລົມແຮງຈະພາພວກເຮົາຝ່າຄື້ນໄປໄດ້." ຕອນນັ້ນພວກເຂົາກົ້ມໜ້າຈົດຂຽນ, ປັດຈຸບັນ ພວກເຂົາກາຍເປັນສາຍລົມອັນແຂງແຮງ, ພັດຂ້າມພູຜາທີ່ຊ້ອນກັນເປັນຊັ້ນໆ, ໄຕ້ແສງໄຟໃຫ້ບ້ານເຮືອນນັບໝື່ນ.

ປັດຈຸບັນ, ຂ້າພະເຈົ້າໄດ້ຈາກປະເທດລາວມາແລ້ວ, ໃນບາງຄືນກໍຄິດຂຶ້ນມາວ່າ: ໃນແສງໄຟທີ່ສ່ອງແຈ້ງໃນພູເລີກຂອງລາວນັ້ນ, ມີສ່ວນໜຶ່ງຂອງກະແສໄຟຟ້າທີ່ຂ້າພະເຈົ້າໄດ້ເຂົ້າຮ່ວມສົ່ງຕໍ່, ມີຄວາມຫວັງທີ່ພວກເຮົາໄດ້ຮ່ວມກັນຫຼໍ່ລ້ຽງ. ການເຊື່ອມໂຍງຂອງມູນຄ່າທີ່ຂ້າມຜ່ານພູຜາ, ຂ້າມຜ່ານເວລາ, ໄດ້ກຳນົດນິຍາມຄືນໃໝ່ໃຫ້ແກ່ການຍຶດໝັ້ນທັງໝົດ, ຄວາມມຸ່ງໝັ້ນທັງໝົດ ແລະ ຄວາມຮັກທັງໝົດໃນທຸກມື້ນີ້.



### ຮ່ວມມືຊ່ວຍ "ກອບກູ້ຫົວໃຈ" ຂ້າມຊາດ

ທ່ານ ລູ ຊ້ານ (Lu Can) ຫົວໜ້າໜ່ວຍງານການແພດ ຂອງໂຮງໝໍປະຊາຊົນເລກ 1 ແຂວງຢຸນນານ ທີ່ໃຫ້ການຊ່ວຍເຫຼືອໂຮງໝໍແຂວງຫຼວງພະບາງ ສປປ ລາວ

ເດືອນກັນຍາປີ 2024, ຂ້າພະເຈົ້າໃນນາມທີ່ເປັນບຸກຄົນໜຶ່ງໃນໜ່ວຍງານການແພດຂອງໂຮງໝໍປະຊາຊົນເລກ 1 ແຂວງຢຸນນານ ທີ່ໃຫ້ການຊ່ວຍເຫຼືອດ້ານການແພດແກ່ໂຮງໝໍແຂວງຫຼວງພະບາງລາວ, ເປັນເທື່ອທຳອິດທີ່ໄດ້ເດີນທາງມາເຖິງ ຫຼວງພະບາງ ດິນແດນທີ່ສວຍງາມ, ເປັນຈຸດເລີ່ມຕົ້ນຂອງວຽກງານການຊ່ວຍເຫຼືອດ້ານການແພດຂອງຂ້າພະເຈົ້າ.

ມີກໍລະນີປິ່ນປົວໜຶ່ງທີ່ເຮັດໃຫ້ຂ້າພະເຈົ້າຈົດຈຳບໍ່ເຄີຍລືມ, ນັ້ນກໍຄືກໍລະນີການຜ່າຕັດປິ່ນປົວດ້ວຍການສອດທໍ່ເຂົ້າໃນເສັ້ນເລືອດຫົວໃຈຜ່ານຜິວໜັງ (PCI) ທີ່ເປັນກໍລະນີປິ່ນປົວຄັ້ງທຳອິດ ຂອງໂຮງໝໍຫຼວງພະບາງລາວ. ໃນມື້ນັ້ນ ຜູ້ປ່ວຍຊາຍຄົນໜຶ່ງ ມີອາການເຈັບໜ້າເອິກກະທັນຫັນ ທົ່ວຮ່າງກາຍເຕັມໄປດ້ວຍນ້ຳເຫື່ອ, ຊຶ່ງໄດ້ຖືກນຳສົ່ງມາປິ່ນປົວແບບສຸກເສີນ, ຂ້າພະເຈົ້າບົ່ງມະຕິພະຍາດທັນທີວ່າ ເປັນພະຍາດ ຫົວໃຈວາຍ ທີ່ເກີດຈາກລະດັບຄວາມສູງຂອງ ST, ຊຶ່ງມີຄວາມເປັນອັນຕະລາຍສູງ. ໃນເວລານັ້ນ ຢູ່ຕໍ່ໜ້າຂອງຂ້າພະເຈົ້າ ມີພຽງແຕ່ 2 ທາງເລືອກເທົ່ານັ້ນ ນັ້ນກໍຄື: ສົ່ງໄປປິ່ນປົວຢູ່ນະຄອນຫຼວງວຽງຈັນ ຫຼື ດຳເນີນການຜ່າຕັດດຽວນີ້. ເມື່ອພິຈາລະນາເຖິງຂໍ້ຈຳກັດດ້ານອຸປະກອນການແພດຂອງໂຮງໝໍທ້ອງຖິ່ນ, ການເຮັດວຽກຮ່ວມກັນທີ່ຍັງບໍ່ເຂົ້າກັນດີເທົ່າທີ່ຄວນ ແລະ ບັນຫາອື່ນໆ. ພ້ອມທັງຄຳນຶງເຖິງຄວາມວິຕົກກັງວົນຂອງຄົນເຈັບ, ຜ່ານການປຶກສາຫາລືກັບຄົນເຈັບ, ຈຶ່ງໄດ້ຮັບປາກວ່າ ເຕັກນິກການປິ່ນປົວຂອງບຸກຄະລາກອນການແພດຈີນສາມາດດຳເນີນການຜ່າຕັດໄດ້, ຄົນເຈັບຈຶ່ງເຊື່ອໝັ້ນຕໍ່ພວກເຮົາ.

ແຕ່ໃນເວລາກະກຽມການຜ່າຕັດນັ້ນ, ພວກເຮົາພັດພົບວ່າຂາດອຸປະກອນການປິ່ນປົວທີ່ສຳຄັນ ນັ້ນກໍຄື ເຄື່ອງປຸ່ນຄວາມດັນ (Pressure transducer), ນັ້ນກໍຄືເຄື່ອງກວດສອບຄວາມດັນຫຼອດເລືອດຂອງຄົນເຈັບ, ເຖິງແມ່ນວ່າຈະບໍ່ມີຜົນກະທົບຫຍັງຕໍ່ກັບການຜ່າຕັດ, ແຕ່ພັດອາດຈະເພີ່ມຄວາມສ່ຽງຂອງການຜ່າຕັດ. ຂ້າພະເຈົ້າຈຶ່ງໄດ້ມີການປຶກສາກັບໝູ່ເພື່ອນກ່ອນຈະເຂົ້າຫ້ອງຜ່າຕັດ, ຄວາມສະຫງົບນິ່ງຂອງລາວ ເຮັດໃຫ້ຂ້າພະເຈົ້າມີຄວາມໝັ້ນໃຈ. ໃນເວລາຜ່າຕັດ, ຄົນເຈັບທີ່ເປັນໄວໜຸ່ມມີຄວາມວິຕົກກັງວົນຫຼາຍ, ແຮງດັນເລືອດເພີ່ມຂຶ້ນຢ່າງກະທັນຫັນ, ຂ້າພະເຈົ້າຈັບມືລາວໃຫ້ແໜ້ນ, ເວົ້າປອບໃຈແບບເບົາໆ ວ່າ: "ບໍ່ຕ້ອງຢ້ານ, ຂ້ອຍຈະຊ່ວຍຊີວິດເຈົ້າ." ພາຍໃຕ້ສະພາບການໃສ່ຢາສະຫຼົບນັ້ນ, ລາວມີຄວາມສະຫງົບນິ້ງ, ຈົນສຳເລັດການຜ່າຕັດ, ລາວຍັງບໍ່ເຊື່ອວ່າໄດ້ສຳເລັດການຜ່າຕັດແລ້ວ ຈຶ່ງຖາມວ່າ: "ທ່ານໝໍການຜ່າຕັດ ຄືໃຊ້ເວລາໄວແທ້?" ອີກ 5 ວັນຕໍ່ມາລາວ ກໍໄດ້ອອກໂຮງໝໍ, ລາວ ໄດ້ຂໍວີແຊັດຂອງຂ້າພະເຈົ້າ, ໂດຍໄດ້ຂອບໃຈຕະຫຼອດເວລາ, ຍັງເຊື້ອເຊີນຂ້າພະເຈົ້າໄປເປັນແຂກເຂົ້າພັກຢູ່ໂຮງແຮມຂອງລາວ.

ຕະຫຼອດເວລາທີ່ເຮັດວຽກງານຊ່ວຍເຫຼືອປະເທດລາວ, ບັນຍາກາດອັນອົບອຸ່ນຄ້າຍຄືກັນນີ້ໄດ້ເກີດຂຶ້ນຫຼາຍຄັ້ງ. ມີຄົນຫຼວງພະບາງຄົນໜຶ່ງ, ທີ່ໄດ້ສຶກສາຮ່ຳຮຽນຂັ້ນປະລິນຍາເອກຢູ່ ສປ ຈີນ ແລ້ວກັບຄືນມາສອນຢູ່ມະຫາວິທະຍາໄລສຸພານຸວົງ, ສາມາດເວົ້າພາສາຈີນໄດ້ຢ່າງລ່ຽນໄຫຼ, ກໍໄດ້ມີການເຊື້ອເຊີນພວກເຮົາ ໄປປິ່ນປົວພະຍາດຫຼອດເລືອດສະໝອງອຸດຕັນຂອງແມ່ເພິ່ນ. ຜ່ານການກວດພະຍາດໃຫ້ແມ່ເພິ່ນ, ເຫັນວ່າທ່ານໝໍລາວ ສາມາດປິ່ນປົວໃຫ້ໄດ້ເປັນຢ່າງດີ, ນີ້ກໍເປັນການສະແດງໃຫ້ເຫັນເຖິງ ເງື່ອນໄຂ ແລະ ເຕັກນິກການປິ່ນປົວຂອງລາວ ກໍມີຄວາມກ້າວໜ້າຂຶ້ນຢ່າງຕໍ່ເນື່ອງ. ຍັງມີກໍລະນີ ລະທຶກໃຈຍາມກາງຄືນ, ໃນຕອນນັ້ນ ເປັນກາງຄືນ ເວລາ 2:50 ໂມງ, ສຽງໂທລະສັບສຸກເສີນດັງຂຶ້ນ, ຄົນເຈັບຄົນໜຶ່ງ ມີອາການຫົວໃຈເຕັ້ນຜິດປົກກະຕິຢ່າງຮ້າຍແຮງ, ອັດຕາການເຕັ້ນຂອງຫົວໃຈ 200 ຄັ້ງ/ນາທີ, ຂ້າພະເຈົ້າ ແລະ ຜູ້ແປພາສາ ກໍພາກັນຮີບຮ້ອນເດີນທາງໄປໂຮງໝໍ, ແລ້ວຈຶ່ງໄດ້ແນະນຳໃຫ້ມີການນຳໃຊ້ການຊັອດໄຟຟ້າໃຫ້ຫົວໃຈກັບມາເຕັ້ນໃນຈັງຫວະປົກກະຕິ, ພະຍາຍາມໃຫ້ທ່ານໝໍລາວ ທີ່ບໍ່ເຄີຍປະຕິບັດຕົວຈິງ ໄດ້ມີໂອກາດຜ່າຕັດ, ພວກເຮົາຢູ່ດ້ານຂ້າງ ເພື່ອແນະນຳການຜ່າຕັດ, ໃນທີ່ສຸດຄົນເຈັບກໍປ່ຽນຈາກສະພາບສຸກເສີນ ມາຢູ່ໃນສະພາບທີ່ສາມາດຄວບຄຸມໄດ້, ອັດຕາການເຕັ້ນຂອງຫົວໃຈຫຼຸດລົງມາຢູ່ໃນລະດັບ 80 ຄັ້ງ/ນາທີ. ທ່ານໝໍທີ່ປະຈຳການໃນເວລານັ້ນ ກໍຈັບມືຂອງຂ້າພະເຈົ້າຢ່າງແໜ້ນແລ້ວເວົ້າວ່າ, ຕອນທີ່ເພິ່ນສຶກສາຮ່ຳຮຽນຢູ່ໄທ ກໍເຄີຍເຫັນກໍລະນີນີ້, ແຕ່ບໍ່ມີໂອກາດໄດ້ເຮັດຕົວຈິງ, ສະນັ້ນ ຕໍ່ກັບຄວາມໄວ້ວາງໃຈ ແລະ ໂອກາດໃນການເຕີບໃຫຍ່ຄັ້ງນີ້, ລາວສະແດງຄວາມຂອບໃຈເປັນຢ່າງຍິ່ງ ແລະ ຈະບໍ່ມີວັນລືມ.

ຂ້າພະເຈົ້າມັກເວົ້າວ່າ, ໂຄງການຂອງພວກເຮົາບໍ່ແມ່ນໂຄງການທີ່ເຮັດວຽກເພື່ອສັງຄົມເທົ່ານັ້ນ, ແຕ່ເປັນກາຊ່ວຍເຫຼືອສ້າງຄວາມຜາສຸກໃຫ້ປະຊາຊົນຢ່າງແທ້ຈິງ. ໃນເມື່ອຄົນເຈັບບໍ່ຈຳເປັນຕ້ອງຂ້າມນ້ຳຂ້າມພູຜາເພື່ອໄປປິ່ນປົວສຸຂະພາບຢູ່ນະຄອນຫຼວງວຽງຈັນ ຫຼື ໄປປະເທດໄທ, ແຕ່ຢູ່ໜ້າເຮືອນຂອງຕົນເອງ ກໍສາມາດຮັບການປິ່ນປົວທີ່ມີຄຸນນະພາບສູງໄດ້; ພາຍໃຕ້ການຕິດຕາມຊ່ວຍເຫຼືອຂອງພວກເຮົາໃນຕະຫຼອດ 24 ຊົ່ວໂມງ ບຸກຄະລາກອນທ້ອງຖິ່ນ ສາມາດຍົກລະດັບເຕັກນິກການປິ່ນປົວຢ່າງຕໍ່ເນື່ອງ ແລະ ມີຄວາມເຊື່ອໝັ້ນຕົນເອງສູງຂຶ້ນ. ໂຄງການດັ່ງກ່າວຍັງສ້າງຜົນດີໃຫ້ແກ່ ຄົນຈີນ ແລະ ຄົນຕ່າງປະເທດອື່ນໆ ທີ່ພັກອາໄສຢູ່ທີ່ນີ້, ພວກເພິ່ນມັກເວົ້າວ່າ ມີບຸກຄະລາກອນການແພດຈີນຢູ່, ພວກເຮົາຮູ້ສຶກສະບາຍໃຈ. ຄົນເຈັບຊາວຝລັ່ງຄົນໜຶ່ງ, ປັດຈຸບັນໄດ້ກາຍມາເປັນເພື່ອນຮັກຂອງຂ້າພະເຈົ້າ.

ການຊ່ວຍເຫຼືອມີໄລຍະເວລາທີ່ສັ້ນ, ແຕ່ມິດຕະພາບ ແລະ ຄວາມຮັບຜິດຊອບ ທີ່ຂ້າມພູຜາຂ້າມທະເລ, ມັນໄດ້ຖືກຈາລຶກລົງໃນຫົວໃຈຂອງຂ້າພະເຈົ້າ. ພວກເຮົາບໍ່ພຽງແຕ່ເປັນຜູ້ຖ່າຍທອດເຕັກນິກການແພດ, ທັງເປັນຜູ້ຂີດຂຽນບົດກະວີທີ່ອົບອຸ່ນແຫ່ງຄູ່ຮ່ວມສະຕາກຳ ລາວ-ຈີນ.

(ສະໜອງຂໍ້ມູນໂດຍ: ວາລະສານ "ຈຳປາ" ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)

www.yunnangateway.com